ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ທະນາຄານແຫ່ງ ສປປ ລາວ ດຳເນີນກອງປະຊຸມສະພາບໍລິຫານຂອງຕົນ ຄັ້ງທີ I ປະຈຳປີ 2026




ໃນວັນທີ 14 ມັງກອນ 2026 ທີ່ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມສະພາບໍລິຫານຂອງຕົນ ຄັ້ງທີ I ປະຈຳປີ 2026 ໂດຍການເປັນປະທານຂອງ ທ່ານ ນ. ບຸນຄຳ ວໍລະຈິດ, ຜູ້ວ່າການ, ປະທານສະພາບໍລິຫານ ທຫລ, ມີຮອງປະທານ, ບັນດາກຳມະການສະພາບໍລິຫານ, ຮອງຜູ້ວ່າການ ທຫລ ແລະ ບັນດາກົມກ່ຽວຂ້ອງຈຳນວນໜຶ່ງຂອງ ທຫລ ເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມ ກໍ່ເພື່ອສະຫຼຸບ-ຕີລາຄາໝາກຜົນການເຄື່ອນໄຫວວຽກງານຂອງ ທຫລ ປະຈຳປີ 2025 ແລະ ກຳນົດທິດທາງແຜນການເຄື່ອນໄຫວ ປະຈຳປີ 2026. ນັບແຕ່ກອງປະຊຸມສະພາບໍລິຫານ ທຫລ ຄັ້ງຜ່ານມາ, ທຫລ ໄດ້ເອົາໃຈໃສ່ຜັນຂະຫຍາຍມະຕິຂອງກອງປະຊຸມດັ່ງກ່າວ ຢ່າງເປັນເຈົ້າການ ແລະ ດ້ວຍຄວາມຮັບຜິດຊອບສູງ ຊຶ່ງມີຜົນສຳເລັດຫຼາຍດ້ານ ໂດຍສະເພາະອັດຕາເງິນເຟີ້ ສະເລ່ຍໃນປີ 2025 ຢູ່ໃນລະດັບ 7.7% ຫຼຸດລົງຈາກ ລະດັບ 23.13% ໃນປີ 2024; ອັດຕາແລກປ່ຽນມີຄວາມສະຫງົບໂດຍພື້ນຖານ ແລະ ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າໄດ້ 6.45 ເດືອນ; ປະລິມານເງິນ M2 ຂະຫຍາຍຕົວ 18.72% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສະຖຽນລະພາບທາງດ້ານການເງິນມີຄວາມໝັ້ນທ່ຽງໃນລະດັບດີ, ອັດຕາສ່ວນ NPLs ຢູ່ໃນລະດັບ 1.18%; ພ້ອມນີ້, ກອງປະຊຸມຍັງໄດ້ລົງເລິກຕີລາຄາຜົນສຳເລັດ ແລະ ຂໍ້ຄົງຄ້າງໃນແຕ່ລະໜ້າວຽກ, ພ້ອມທັງກຳນົດທິດທາງແຜນການ ໃຫ້ຈະແຈ້ງ ແລະ ແທດເໝາະກັບສະພາບຕົວຈິງຍິ່ງຂຶ້ນ.





ກອງປະຊຸມໄດ້ດຳເນີນໄປເປັນເວລາເຄິ່ງວັນ ດ້ວຍຄວາມຮັບຜິດຊອບສູງ ແລະ ເປັນເຈົ້າການຂອງສະມາຊິກສະພາບໍລິຫານ ແລະ ພາກສ່ວນກ່ຽວຂ້ອງ ຈຶ່ງເຮັດໃຫ້ກອງປະຊຸມໃນຄັ້ງນີ້ສຳເລັດຜົນ ຕາມລະດັບຄາດໝາຍທີ່ວາງໄວ້.



ຂ່າວ-ພາບ: ຫ້ອງການ ທະນາຄານແຫ່ງ ສປປ ລາວ

ຢູ່ເມືອງລາວໃຊ້ເງິນກີບລາວ